# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 12 ຕຸລາ 2008 (10-12-2008)

## ພຣະເຈົ້າຮັກຄົນບາບ

**ຂໍ້ພຣະຄັມພີໃນບົດຮຽນ:** ໂຣມ 5 : 6 - 19

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?**

ບົດຮຽນນີ້ຈະຊ່ອຍໃຫ້ທ່ານແນ່ນອນໃຈວ່າພຣະເຈົ້າຮັກທ່ານ. ທ່ານບໍ່ຕ້ອງພະຍາຍາມເຮັດສິ່ງໃດເພື່ອໃຫ້ພຣະເຈົ້າຊອບພຣະທັຍຫລືສແວງຫາຄວາມລອດພົ້ນດ້ວຍຕົນເອງ. ເມື່ອເປັນດັ່ງນັ້ນ, ພຣະເຈົ້າຈຶ່ງຊົງປະທານຄວາມລອດພົ້ນໃຫ້ແກ່ທ່ານເປັນຂອງຂວັນທີ່ທ່ານໄດ້ລ້າ ໆ. ສິ່ງທີ່ທ່ານຄວນຈະທຳກໍແມ່ນຮັບເອົາໄວ້ດ້ວຍຄວາມຍິນດີ.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ບົດຮຽນນີ້ຈະຊ່ອຍໃຫ້ທ່ານຄົ້ນພົບວ່າພຣະເຈົ້າໄດ້ສະແດງຄວາມຮັກຂອງພຣະອົງເພື່ອຄົນບາບ, ດ້ວຍການສົ່ງພຣະບຸດອົງດຽວຂອງພຣະອົງລົງມາຕາຍເທິງໄມ້ກາງແຂນເພື່ອຄົນບາບທັງຫລາຍ. ແລະຍັງໄດ້ມອບຊີວິດອັນຕລອດໄປເປັນນິດໃຫ້ກັບເຂົາ ແທນທີ່ພວກເຂົາຈະໄດ້ຮັບການພິພາກສາຕາມທີ່ພວກເຂົາຄວນຈະໄດ້ຮັບ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:**

ເມື່ອຜູ້ຄົນທັງຫຼາຍໄດ້ຍອມຮັບວ່າພວກເຂົາເປັນຄົນບາບ, ຕາມປົກກະຕິແລ້ວພວກເຂົາຕ້ອງການເຮັດສິ່ງໃດສິ່ງນຶ່ງເພື່ອເຮັດໃຫ້ພວກເຂົາກາຍເປັນຄົນມີຄຸນຄ່າເພື່ອຮັບຄວາມລອດພົ້ນຂອງພຣະເຈົ້າ. ບົດຮຽນນີ້ໄດ້ສເນີຂ່າວດີໃຫ້ຮູ້ວ່າ ຄົນທັງຫຼາຍບໍ່ສາມາດຈະເຮັດສິ່ງໃດທີ່ຈະຊອບພຣະທັຍຂອງພຣະເຈົ້າໄດ້. ພຣະເຈົ້າຮັກຄົນບາບແລະຊົງມອບຄວາມລອດພົ້ນໃຫ້ແກ່ເຂົາລ້າໆ.

ມໍຣີໄດ້ເພັ່ງເບິ່ງ "ແມັກ" ເພື່ອນຂອງລາວ ແລະຖາມວ່າ. ເປັນຫຍັງພຣະເຈົ້າແຫ່ງຄວາມຮັກຈຶ່ງປ່ອຍໃຫ້ສິ່ງນີ້ເກີດຂຶ້ນ? ສະກ໊ອດຜູ້ເປັນອ້າຍຂອງລາວໄດ້ຈົມນ້ຳຕາຍໃນມື້ກ່ອນນັ້ນ. ແມັກ ພະຍາຍາມທີ່ຈະປອບໃຈເພື່ອນຂອງລາວດ້ວຍຂໍ້ຄວາມທີ່ກ່າວໄວ້ໃນພຣະຄັມພີ ແຕ່ມໍຣີ ກໍມີລັກສະນະທ່າທີໂກດຮ້າຍ. ແມັກໄດ້ໂຕ້ຕອບໄປດ້ວຍຄວາມສຸພາບ, ຂ້ອຍເຂົ້າໃຈດີວ່າການຕາຍຂອງ ສກ໊ອດ ເຮັດໃຫ້ເສົ້າສລົດໃຈແລະເຈົ້າໄດ້ຮັບຄວາມເຈັບປວດ. ແຕ່ອ້າຍຂອງເຈົ້າໄດ້ເຊື່ອແລະຮັບເອົາອົງພຣະເຢຊູຄຣິດ, ພຣະບຸດຂອງພຣະເຈົ້າ ເປັນພຣະຜູ້ໂຜດໃຫ້ພົ້ນຂອງລາວແລ້ວ. ເພາະວ່າພຣະເຈົ້າຊົງຮັກພວກເຮົາ ຈຶ່ງໄດ້ສົ່ງພຣະບຸດຄືພຣະເຢຊູຄຣິດມາຕາຍເທິງໄມ້ກາງແຂນແທນຄວາມບາບຂອງພວກເຮົາ ຍັງມີຫຍັງອີກແດ່ທີ່ພຣະເຈົ້າຈະພິສູດໃຫ້ເຫັນຄວາມຮັກຂອງພຣະອົງ?

ພວກເຮົາເປັນຄົນບາບໝົດຫົນທາງຈະແກ້ໄຂທີ່ຈະຊ່ອຍຕົນເອງໄດ້.ຍັງມີຫຍັງທີ່ພິເສດໄປກວ່າຄວາມຮັກຂອງພຣະເຈົ້າພ້ອມກັບຄວາມລອດພົ້ນທີ່ພຣະອົງໄດ້ນຳມາໃຫ້ໂດຍຜ່ານທາງຄວາມຕາຍຂອງພຣະບຸດພຣະອົງ ?

**1. ຂໍ້ພິສູດ** ໂຣມ 5 : 6 – 11

ມີຢູ່ເລື້ອຍໆທີ່ພວກເຮົາສຳຣວດເບິ່ງຕົນເອງເຣື່ອງສຸຂພາບ. ການສະເທືອນອາລົມທາງເສຖກິດ, ຫຼືການທຳມາຫາກິນ ພຣະເຈົ້າໄດ້ເບິ່ງພວກເຮົາໃນອີກທາງນຶ່ງ, ຄວາມເປັນຫ່ວງອັນດັບແລກຂອງພຣະອົງແມ່ນເຣື່ອງຄວາມສຳພັນລະຫວ່າງພວກເຮົາກັບພຣະອົງ.

ທ່ານອາຈານໂປໂລໄດ້ບັນລະຍາຍວ່າ ຄົນທີ່ບໍ່ມີຄວາມພົ້ນຄືກັບຄົນທີ່ຂາດຜູ້ຊ່ອຍ...ບໍ່ມີພຣະເຈົ້າ... ເປັນຄົນບາບ...ແລະເປັນສັດຕຣູກັນ. ຄຳເວົ້ານີ້ລ້ວນແຕ່ເປັນການເວົ້າສະແດງເຖິງບຸກຄົນກຳລັງຫຼົງເສັ່ງໃນຝ່າຍຈິດວິນຍານທີ່ບໍ່ມີຄວາມສາມາດຍອມຮັບການໂປດປານຂອງພຣະເຈົ້າ. ທ່ານອາຈານໂປໂລໄດ້ອະທິບາຍກ່ຽວກັບຜູ້ທີ່ບໍ່ເຊື່ອຄືກັບ

ສັດຕຣູ, ຂາດປະສົບປະການໂດຍທັມະຊາດແລະໂດຍການເລືອກສັນ. ເຖິງແມ່ນພວກເຮົາບໍ່ຄິດວ່າພວກເຮົາເປັນສັດຕຣູຂອງພຣະເຈົ້າ, ແຕ່ອາຈານໂປໂລໄດ້ເວົ້າເຖິງການປະພຶດຂອງພວກເຮົາກ່ອນທີ່ພວກເຮົາໄດ້ຮັບຄວາມລອດພົ້ນ. ຄວາມຮັກຂອງພຣະເຈົ້າບໍ່ໄດ້ຂຶ້ນຢູ່ກັບອັນໃດອັນນຶ່ງ ພວກທ່ານແມ່ນໄດ້ຮັບເອົາຄວາມຮັກຂອງພຣະອົງແລ້ວ ແມ່ນຫຍັງເຮັດໃຫ້ພວກເຮົາຮູ້ສຶກວ່າເວລາໃດເວລານຶ່ງພວກເຮົາໄດ້ຮັບຄວາມຮັກຂອງພຣະເຈົ້າ ? ພຣະເຈົ້າຍອມເສັຽສລະພຣະບຸດຂອງພຣະອົງເພື່ອພິສູດໃຫ້ເຫັນຄວາມລອດພົ້ນຂອງພວກເຮົາເກີນກວ່າການທີ່ຈະຄາດເດົາວ່າພຣະເຈົ້າຮັກພວກເຮົາ.

ໂປໂລໄດ້ກ່າວວ່າພຣະຄຣິດ**ໄດ້ຕາຍ**ເພື່ອຄວາມຜິດບາບຂອງພວກເຮົາ. ພຣະຄຣິດໄດ້ຕາຍຕາມເວລາທີ່ໄດ້ກຳນົດໄວ້- **ຕາມກຳນົດໝາຍຂອງພຣະເຈົ້າ.** ປະຫວັດສາດຂອງໂລກໄດ້ກ້າວມາສູ່ຈຸດທີ່ສຳຄັນ ທີ່ພຣະເຈົ້າຊົງຈັດຕຽມໄວ້. ພຣະເຢຊູຊົງເອີ້ນເວລານັ້ນວ່າ "ເວລາຂອງເຮົາ" ການສະເດັດມາແລະການຕາຍຂອງພຣະຄຣິດໄດ້ເກີດຂຶ້ນຕາມກຳນົດຢ່າງຖືກຕ້ອງແນ່ນອນ ຕາມເວລາທີ່ພຣະເຈົ້າຊົງໄດ້**ກຳນົດໄວ້.**

ການຄືນພຣະຊົນຂອງພຣະຄຣິດແມ່ນການອັສຈັນຫຼືເໜືອກວ່າຄຳອະທິບາຍໃດໆທັງສິ້ນທີ່ອອກມາຈາກຄວາມຮັກຂອງພຣະອົງ, ອາຈານໂປໂລໄດ້ກ່າວເປັນຄຳຖາມວ່າມີເພື່ອນຄົນໃດແດ່ທີ່ສາມາດຕາຍເພື່ອມິດສະຫາຍຂອງຕົນໄດ້. ຕາມທຳມະດາມະນຸດເຮົາຈະບໍ່ມັກສົນໃຈນຳຄົນອື່ນ ໂດຍສະເພາະເວລາເຫັນໃຜຜູ້ນຶ່ງຕົກຢູ່ໃນຄວາມທຸກຍາກລຳບາກ ຖ້າວ່າລາວຫາກເປັນບຸກຄົນສຳຄັນຫຼືຄົນດີພວກເຮົາອາດຈະຕາຍເພື່ອລາວໄດ້. ທ່ານສາມາດຕາຍເພື່ອຄົນແນວໃດ ຄົນດີຫຼືຄົນຊົ່ວ. ທະຫານທີ່ກ້າຕາຍກໍເພາະໜ້າທີ່, ຕຳຣວດກໍຕາຍເພື່ອໜ້າທີ່ແລະພວກກູ້ພັຍກໍສລະຊີວິດຂອງຕົນເພື່ອຄົນອື່ນໂດຍບໍ່ຄຳນຶງເຖິງຕົນເອງ. ແຕ່ພຣະເຈົ້າສະແດງຄວາມຮັກຂອງພຣະອົງໂດຍປະທານພຣະບຸດອົງດຽວຂອງພຣະອົງເພື່ອຄົນບາບທຸກຄົນ. ຄວາມຮັກອັນບໍຣິສຸດຂອງພຣະເຈົ້າໄດ້ເປັນຂອງຂວັນອັນລ້ຳຄ່າທີ່ມອບໃຫ້ແກ່ມະນຸດທຸກຄົນ ຊຶ່ງບໍ່ສົມຄວນທີ່ຈະໄດ້ຮັບ, ພຣະຄຣິດໄດ້ສິ້ນພຣະຊົນເພື່ອທ່ານ.

ການສິ້ນພຣະຊົນຂອງພຣະບຸດບໍ່ແມ່ນເຣື່ອງທີ່ຈະມາໂຕ້ວາທີກັນແຕ່ເປັນຂອງຂວັນທີ່ມາຈາກພຣະເຈົ້າແລະເປັນພຣະປະສົງຂອງພຣະອົງ.ແມ່ນຫຍັງທີ່ເຮັດໃຫ້ມີຄວາມແຕກຕ່າງໃນການສິ້ນພຣະຊົນຂອງພຣະຄຣິດເພື່ອເຮົາ.? ການສິ້ນພຣະຊົນຂອງພຣະຄຣິດແມ່ນມີພຣະປະສົງ. ຍ້ອນການຍອມເສັຽສະລະຂອງພຣະອົງຈຶ່ງເຮັດໃຫ້ຄົນບາບກາຍເປັນຄົນຊອບທັມແລະຜູ້ທີ່ເປັນສັດຕຣູໄດ້ມີໂອກາດກັບຄືນມາຫາພຣະເຈົ້າ, ພຣະເຈົ້າມີຄວາມຮັກແລະມີຄວາມເມດຕາສົງສານ. ແຕ່ພຣະອົງຍັງເປັນພຣະເຈົ້າອົງບໍຣິສຸດແລະຊອບທັມ,ແລະບໍ່ເມີນເສີຍກັບຄວາມບາບຂອງພວກເຮົາ.ໂທດຂອງຄວາມບາບຄືຄວາມຕາຍ( ໂຣມ 6 : 23 ) ມີພຽງແຕ່ພຣະໂລຫິດຂອງພຣະເຢຊູພວກເຮົາຈຶ່ງຖືກເອີ້ນວ່າເປັນຄົນຊອບທັມ.ເມື່ອເຮົາຕອນຮັບເອົາພຣະເຢຊູຄຣິດເປັນພຣະຜູ້ຊ່ອຍ,ພຣະເຈົ້າໃຫ້ເຮົາກາຍເປັນຄົນຊອບທັມແລະຄືນດີກັບພຣະອົງໃນອົງພຣະເຢຊູຄຣິດພວກເຮົາຈຶ່ງບໍ່ຖືກການປ້ອຍດ່າເພາະພຣະອົງໄດ້ຊ່ອຍເຮົາໃຫ້ລອດພົ້ນ.ເປັນຫຍັງຜູ້ທີ່ມີຄວາມເຊື່ອຈຶ່ງບໍ່ຢ້ານຄວາມປ້ອຍດ່າຂອງພຣະເຈົ້າ,ພຣະເຈົ້າໃຫ້ພວກເຂົາເຮັດຫຍັງ ? ການສິ້ນພຣະຊົນຂອງພຣະຄຣິດແມ່ນເປັນຄວາມຊົມຊື່ນຍິນດີ.ພຣະຄຣິດໄດ້ຊົງອົດທົນເທິງໄມ້ກາງແຂນ "ເພາະເຫັນແກ່ຄວາມຍິນດີທີ່ຕັ້ງໄວ້ຕໍ່ໜ້າພຣະອົງ" (ເຮັບເຣີ 12 : 2 ) ພວກເຮົາຈຶ່ງມີຄວາມຊົມຊື່ນຍິນດີເພາະພຣະເຈົ້າໄດ້ໃຫ້ພວກເຮົາຄືນດີກັນກັບພຣະອົງໂດຍການສິ້ນພຣະຊົນຂອງພຣະບຸດຂອງພຣະອົງ.ພວກເຮົາຈຶ່ງປະສົບກັບຄວາມບໍຣິສຸດ, ແລະເອົາຊະນະຄວາມບາບໄດ້ໂດຍພຣະອົງເອງ. ດັ່ງນັ້ນການສິ້ນພຣະຊົນຂອງພຣະເຢຊູຄຣິດເປັນທີ່ພຽງພໍສຳລັບຜູ້ທີ່ເຊື່ອຈະໄດ້ຮັບອິສຣະແລະຫລຸດພົ້ນຈາກການປ້ອຍດ່າແລ້ວໄດ້ກັບຄືນດີກັບພຣະເຈົ້າ,ພວກເຮົາຈະຕອບສນອງຂອງຂວັນຂອງພຣະເຈົ້າຕໍ່ພຣະເຢຊູຄຣິດຄືແນວໃດ?ຖ້າເຈົ້າໄດ້ຮັບຄວາມລອດພົ້ນແລ້ວຈົ່ງຊົມຊື່ນຍິນດີເພາະວ່າພວກເຮົາໄດ້ຄືນດີກັນກັບພຣະເຢຊູຄຣິດແລ້ວ. ຈົ່ງຊົມຊື່ນຍິນດີໃນເມື່ອທ່ານໄດ້ຮັບຄວາມລອດພົ້ນແລ້ວ.ຄວາມບໍຣິສຸດຂອງທ່ານໄດ້ເປັນທີ່ສຳເຣັດແລ້ວດ້ວຍພຣະອົງເອງ, ພຣະເຈົ້າໄດ້ໃຫ້ຄວາມພົ້ນແກ່ທ່ານໂດຍການສິ້ນພຣະຊົນແລະຄືນພຣະຊົນຂອງພຣະເຢຊູຄຣິດ.

**2. <u>ການລົງໂທດ</u>** : ໂຣມ (5 : 12-14)

ທ່ານອາຈານໂປໂລໄດ້ຢືນຢັນວ່າຄວາມບາບໄດ້ເຂົ້າມາໃນໂລກໂດຍການກະທຳຂອງມະນຸດຄົນນຶ່ງ. ຄວາມບາບຂອງອາດາມມີຜົນສະທ້ອນຕໍ່ພວກເຮົາຄືແນວໃດ? ອາດາມເປັນພໍ່ຂອງຄົນທັງປວງ. ເມື່ອອາດາມບໍ່ເຊື່ອຟັງພຣະເຈົ້າໃນສວນເອເດັນ ຄວາມຕາຍໄດ້ຕົກມາເຖິງລາວແລະແລ້ວກໍແຜ່ມາເຖິງພວກເຮົາ. ທ່ານອາຈານໂປໂລໄດ້ເວົ້າວ່າມະນຸດທຸກຄົນຖືກຕັດສິນເຖິງຄວາມຕາຍເພາະຄວາມບາບ, ຄວາມບາບໃນຕົວຂ້າພະເຈົ້າຈະມີຜົນສະທ້ອນຄືແນວໃດ? ພວກເຮົາເປັນຄົນບາບແຕ່ຕົ້ນກຳເນີດ ໄດ້ຮັບຄວາມບາບຕົກທອດມາຈາກອາດາມແລະບໍ່ມີທາງອື່ນ. ຄວາມຕາຍນີ້ບໍ່ແມ່ນການຕາຍໂດຍທັມມະຊາດເທົ່ານັ້ນ, ມັນແມ່ນການລົງໂທດຂອງພຣະເຈົ້າໃນຄວາມບາບ. ໃນທຳນອງໃດເຮົາຈຶ່ງຮູ້ໄດ້ວ່າຄວາມບາບແລະຄວາມຕາຍມັນມີຄວາມພົວພັນກັນ? ໃນເມື່ອອາດາມໄດ້ນຳຄວາມບາບມາສູ່ມະນຸສໂລກແລະຄວາມຕາຍກໍໄດ້ເຂົ້າມານຳກັນ ທຸກຄົນມີຄວາມບາບແລະກໍຕາຍ ທຸກວັນນີ້ມະນຸດເຮົາຄິດວ່າຜູ້ໃດເຮັດຜູ້ນັ້ນກໍໄດ້ຮັບ ແຕ່ໃນຂໍ້ນີ້ໄດ້ໃຫ້ເຮົາເຫັນວ່າການກະທຳຂອງຄົນໆດຽວເປັນຜົນກະທົບຕໍ່ຄົນຫຼາຍໆຄົນ. ຄວາມບາບກໍບໍ່ໄດ້ຕົກຢູ່ນຳຄົນຜູ້ດຽວ ດ້ວຍເຫດໃດຄວາມຕາຍຈຶ່ງໄດ້ຄອບງຳຕັ້ງແຕ່ອາດາມຈົນເຖິງໂມເຊ? ອາຈານໂປໂລໄດ້ຄຳນຶງເຖິງການຕັດສິນຂອງພຣະເຈົ້າຕໍ່ມະນຸດໃນຄວາມບາບຂອງເຂົາໃນສມັຍນີ້. ອາຈານໂປໂລໄດ້ຢືນຢັນແລ້ວວ່າຜູ້ທີ່ກະທຳບາບໄດ້ເຫີນຫ່າງອອກຈາກພະບັນຍັດ (ໂຣມ 2 : 12 ) ດ້ວຍເຫດໃດອາຈານໂປໂລຈຶ່ງບອກວ່າຄວາມບາບນັ້ນໄດ້ຕົກໃສ່ຜູ້ໃດຜູ້ນຶ່ງ ແລະໄດ້ເນັ້ນໜັກອີກວ່າມະນຸດເຮົາທຸກຄົນເຖິງຢ່າງໃດກໍໄດ້ຕາຍດ້ວຍຄວາມບາບເຂົາ. ແມ່ນຫຍັງເປັນສິ່ງຜູກພັນລະຫວ່າງຄວາມບາບ ພຣະບັນຍັດ ແລະຄວາມຕາຍ ອາຈານໂປໂລຊີ້ໃຫ້ເຫັນໃນຂໍ້ 13–14. ຜູ້ທີ່ຕົກຢູ່ໃນຄວາມບາບແລະຄວາມຕາຍເຖິງແມ່ນວ່າຄວາມບາບຂອງເຂົາບໍ່ໄດ້ລະເມີດພຣະບັນຍັດ ແຕ່ເຮົາກໍຮູ້ວ່າເຂົາກໍເປັນຄົນບາບເພາະວ່າເຂົາຕາຍ ຖ້າວ່າມີຄວາມຕາຍແລ້ວກໍຕ້ອງມີຄວາມບາບໄປນຳ. ອາຈານໂປໂລໄດ້ເນັ້ນໜັກກ່ຽວກັບການລົງໂທດຂອງຄວາມບາບໃນຂໍ້ 14 ເພິ່ນໄດ້ຊຽນເຖິງການຄອບງຳຂອງຄວາມຕາຍ, ຄວາມຕາຍນັ້ນໄດ້ເອົາຊະນະມະນຸດທຸກຄົນ, ຄົນຮັ່ງມີແລະຄົນຍາກຈົນ, ຜູ້ມີອຳນາດແລະຜູ້ອ່ອນແອ. ອາຈານໂປໂລໄດ້ເນັ້ນໜັກວ່າບໍ່ມີໃຜຫຼີກລ້ຽງໄດ້. ໃນເມື່ອບໍ່ມີການຫຼີກລ້ຽງໃນຄວາມບາບແລະຄວາມຕາຍ ພວກເຮົາຈະເຮັດວິທີໃດສຳລັບຜູ້ທີ່ບໍ່ຮູ້ຈັກພຣະຄຣິດ?

ພ້ອມດຽວກັນນັ້ນອາຈານໂປໂລໄດ້ເຕືອນກ່ຽວກັບການລົງໂທດຂອງຄວາມບາບ ທ່ານໄດ້ມອບຄວາມຫວັງໃຫ້ກັບຄົນບາບ ເມື່ອເວົ້າເຖິງອາດາມເປັນຈຸດເລີ້ມຕົ້ນຜູ້ທີ່ສະເດັດກັບມາ, ອາຈານໂປໂລໝາຍເຖິງວ່າຄວາມບາບແລະຄວາມຕາຍເຂົ້າມາພ້ອມຄົນຜູ້ນຶ່ງ (ອາດາມ) ຄ່າຈ້າງຂອງຄວາມບາບແລະຊີວິດອັນຕລອດໄປນິດກໍມາຈາກຄົນຜູ້ດຽວ ( ພຣະເຢຊູຄຣິດ ).

### 3. <u>ຂອງຂວັນອັນລ້ຳຄ່າ</u> (ໂຣມ 5 : 15 – 19)

ຂອງຂວັນອັນລ້ຳຄ່າແລະພຣະຄຸນຂອງພຣະເຈົ້າໄດ້ທົດແທນຄວາມບາບຂອງມະນຸດ ມີທາງໃດອີກແດ່ທີ່ຂອງຂວັນອັນລ້ຳຄ່າແລະພຣະຄຸນຂອງພຣະເຈົ້າທົດແທນຄວາມບາບຂອງມະນຸດ ? ການລະເມີດ ( ຄວາມບາບ ) ກໍ່ໃຫ້ເກີດມີການພິພາກສາ, ການປ້ອຍດ່າ, ການຕາຍ, ຂອງຂວັນອັນລ້ຳຄ່າ..ຄວາມຍຸຕິທັມ..ຄວາມຊອບທັມ..ແລະຊີວິດອັນອັນຕລອດໄປເປັນນິດ. ມະນຸດເຮົາຈຳນວນຫລວງຫລາຍໄດ້ຕາຍຍ້ອນການລະເມີດຄວາມບາບຂອງຄົນຜູ້ນຶ່ງຂອງ ( ອາດາມ) ຂອງຂວັນອັນລ້ຳຄ່າແລະພຣະຄຸນຂອງພຣະເຈົ້າໄດ້ຜ່ານຄົນຜູ້ນຶ່ງ(ພຣະເຢຊູຄຣິດ)ມີໄວ້ພ້ອມສຳລັບມະນຸດທຸກຄົນ. ເຮົາຈະຮັບຊື້ແບບໃດຈຶ່ງຈະສາມາດນຳເອົາຄວາມລອດພົ້ນໄປສູ່ມະນຸສໂລກໄດ້ ? ຄວາມປ້ອຍດ່າໄດ້ເຍືອງໃຫ້ເຫັນເຖິງການຕັດສິນລົງໂທດຢ່າງແນ່ນອນ ຄວາມບາບໄດ້ນຳການພິພາກສາແລະຄວາມຕາຍ,ເຖິງຢ່າງໃດກໍດີ,ການລະເມີດນັ້ນໄດ້ເຮັດໃຫ້ພຣະເຈົ້າໄດ້ມອບພຣະບຸດອົງດຽວຂອງພຣະອົງ ເພື່ອຜູ້ທີ່ລະເມີດນັ້ນຈະໄດ້ຮັບຄວາມຍຸດຕິທັມ ຂອງຂວັນອັນລ້ຳຄ່ານີ້ບໍ່ມີມະນຸດຄົນໃດທີ່ຈະຊອກຫາມາໄດ້ ແຕ່ພຣະເຈົ້າຊົງໄດ້ມອບຄວາມລອດພົ້ນໃຫ້ແກ່ທຸກຄົນ ເພາະວ່າພຣະເຢຊູຄຣິດໄດ້ຈ່າຍຄ່າຄວາມລອດພົ້ນແລ້ວ.ພຣະອົງໄດ້ສິ້ນພຣະຊົນເທິງໄມ້ກາງແຂນແຫ່ງຄວາມບາບຂອງພວກເຮົາ.

ທ່ານອາຈານໂປໂລໄດ້ສືບຕໍ່ການປຽບທຽບການຄອບງຳຂອງຄວາມຕາຍດ້ວຍວ່າຄວາມລະເມີດຂອງຄົນຜູ້ນຶ່ງ, ຜູ້ທີ່ເຊື່ອແລະໄດ້ຕ້ອນຮັບເອົາພຣະຄຸນແລະຄວາມຮັກຂອງພຣະເຈົ້າໃນຊີວິດຂອງເຂົາຈະມີຊັຍຊະນະໃນອົງພຣະເຢຊູຄຣິດ, ພຣະຄຸນແລະຂອງຂວັນຂອງພຣະເຈົ້າໄດ້ທົດແທນຄວາມບາບຂອງມະນຸດ, ອາຈານໂປໂລໄດ້ໃຊ້ຄຳເວົ້າສອງຄຳແຕກຕ່າງກັນກັບຄຳວ່າຂອງຂວັນ ຄຳເວົ້າທີນຶ່ງແມ່ນຂອງຂວັນມາຈາກພຣະເຈົ້າ. ຄຳເວົ້າທີສອງແມ່ນຂອງຂວັນທີ່ໃຫ້ລ້າໆ. ຫຼັງຈາກອາຈານໂປໂລໄດ້ຂຽນເຖິງການຄອບງຳຂອງຄວາມຕາຍພ້ອມການກະທຳຂອງອາດາມ. ຜູ້ອ່ານກໍຢາກໃຫ້ອາຈານໂປໂລຂຽນເຖິງເຣື່ອງ * **ຊີວິດທີ່ມີການປົກຄອງ*** ເພາະວ່າການກະທຳຂອງພຣະເຢຊູຄຣິດມີຄວາມໝາຍແບບໃດ ສຳລັບທ່ານກ່ຽວກັບຊີວິດທີ່ມີການປົກຄອງຂອງພຣະເຢຊູຄຣິດ ? ອາຈານໂປໂລໄດ້ບອກວ່າຜູ້ທີ່ຕ້ອນຮັບເອົາຂອງຂວັນ *ການປົກຄອງໃນຊີວິດ*. ພຣະເຢຊູຄຣິດໄດ້ຊົງໂຜດໃຫ້ຜູ້ທີ່ຕ້ອນຮັບຂອງຂວັນນັ້ນໄດ້ພົ້ນຈາກຄວາມຕາຍແລະໄດ້ຊົງໂຜດໃຫ້ຊີວິດຂອງຂະເຈົ້າໄດ້ຮັບຊັຍຊະນະ.

ຄຳເວົ້າວ່າຫລວງຫລາຍມີຄວາມຫມາຍຢູ່ສອງຢ່າງໃນຂໍ້ 15.ຈຳນວນຫລວງຫລາຍມີຄວາມໝາຍວ່າຫມົດທຸກຄົນຕາຍຍ້ອນຄວາມບາບ,ເຖິງຢ່າງໃດກໍຕາມໃນຂໍ້19.ຄຳເວົ້າຫລວງຫລາຍມີຄວາມຫມາຍວ່າທຸກຄົນເປັນຂອງພຣະຄຣິດ. ບຸກຄົນເຫຼົ່ານັ້ນແມ່ນຫມາຍເຖິງ ຄົນທີ່ມີຄວາມຊອບທັມຕລອດເຖິງຄວາມເຊື່ອຂອງຄົນໆດຽວ. * ພຣະເຢຊູຄຣິດ * ເຊື່ອຟັງຈົນເຖິງທີ່ສຸດ,ເຖິງຄວາມຕາຍທີ່ໄມ້ກາງແຂນ ( ຟີລິບປອຍ 2 : 8 ). ຄ້າຍກັນກັບວ່າ, ໂຣມ 5 : 18 ໄດ້ເຕືອນພວກເຮົາວ່າທຸກໆຄົນແມ່ນໄດ້ຕົກຢູ່ໃນຄວາມປ້ອຍດ່າຍ້ອນຄວາມບາບ, ແຕ່ວ່າຍ້ອນຄວາມຊອບທັມຂອງພຣະເຢຊູຄຣິດ( ການສິ້ນພຣະຊົນຂອງພຣະເຢຊູຄຣິດເທິງໄມ້ກາງແຂນ) ໄດ້ນຳເອົາຄວາມຍຸດຕິທັມມາໃຫ້ທຸກໆຄົນຜູ້ທີ່ເຊື່ອ.

ຄວາມຍຸດຕິທັມມີໄວ້ສຳລັບທຸກຄົນຜູ້ທີ່ຕ້ອນຮັບເອົາພຣະເຢຊູຄຣິດເປັນພຣະຜູ້ໂຜດເທົ່ານັ້ນ.

## ບົດຮຽນແຫ່ງຊີວິດ

ໃນເມື່ອອາດາມໄດ້ນຳເອົາຄວາມບາບແລະຄວາມຕາຍສູ່ລູກຫລານ,ທຸກໆຄົນມີຄວາມຮັບຜິດຊອບຂອງການກະທຳບາບ. ດ້ວຍເຫດນີ້,ເຮົາທຸກຄົນ ໃນແຕ່ລະຄົນຂອງພວກເຮົາຕົກຢູ່ໃນການຕັດສິນລົງໂທດເຖິງຕາຍ, ຂ່າວດີກໍ່ຄືພວກເຮົາບໍ່ຈຳເປັນຈະໄດ້ສິ່ງນັ້ນ. * ແຕ່ພຣະເຈົ້າໄດ້ສຳແດງຄວາມຮັກຂອງພຣະອົງຕໍ່ເຮົາຄືຂະນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫຼາຍ. (ໂຣມ 5 : 8 ) ການກັບໃຈໃຫມ່ແລະຄວາມເຊື່ອ,ພວກເຮົາສາມາດສາລະພາບຄວາມບາບຂອງພວກເຮົາແລະຍອມຮັບເອົາຂອງຂວັນຈາກພຣະເຈົ້າຄືຄວາມຊອບທັມຂອງພຣະອົງ ( ເປັນທີ່ຖືກຕ້ອງຕາມນໍ້າພຣະທັຍຂອງພຣະເຈົ້າ ), ການໃຫ້ອະພັຍແລະຄວາມພົ້ນໄດ້ມາທາງພຣະເຢຊູຄຣິດ.

- ພວກເຮົາຄວນຈະຈື່ແລະຈົດຈຳເອົາໄວ້ວ່າພຣະເຈົ້າປະທານພຣະບຸດອົງດຽວຂອງພຣະອົງສິ້ນພຣະຊົນທີ່ໄມ້ກາງແຂນເພື່ອຄວາມບາບຂອງພວກເຮົາ.
- ພວກເຮົາສົມຄວນຈະສາລະພາບຄວາມບາບຂອງພວກເຮົາແລະຍອມຮັບການລົງໂທດຄວາມບາບຂອງພວກເຮົາ.
- ພວກເຮົາຄວນຕ້ອນຮັບເອົາຂອງຂວັນອັນລ້ຳຄ່າຂອງພຣະເຈົ້າຄືພຣະເຢຊູຄຣິດ,ໂດຍຄວາມເຊື່ອ,ຍອມຮັບການເສັຽສະລະຂອງພຣະອົງເພື່ອຄວາມບາບຂອງພວກເຮົາແລະຕ້ອນຮັບເອົາພຣະເຢຊູຄຣິດເປັນພຣະຜູ້ໂຜດໃຫ້ພົ້ນ.ຖ້າປາສຈາກພຣະເຢຊູຄຣິດແລ້ວທ່ານຈະຢືນຊ້ອງໜ້າພຣະພັກພຣະເຈົ້າໄດ້ແນວໃດ.
- ພວກເຮົາຕ້ອງເປັນຜູ້ຕິດຕາມພຣະເຢຊູຄຣິດແລະກໍເຂົ້າປະກອບສ່ວນຮັບໃຊ້ໃນຄຣິສຕະຈັກຂອງພວກທ່ານແລະຮັບໃຊ້ຕໍ່ຜູ້ທີ່ຍັງບໍ່ເຂົ້າໃຈໃນພຣະຄຣິສອີກດ້ວຍ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by SS**